ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ຫ້ອງການ

0396

ເລກທີ............./ຫກ

ນະຄອນຫຼວງວຽງຈັນ, ວັນທີ 04 MAR 2021

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ.

- ພະນັກງານ, ທະຫານ, ຕຳຫຼວດ, ບັນດາຫົວໜ່ວຍທຸລະກິດ, ໂຮງຈັກໂຮງງານ, ປະຊາຊົນ ບັນດາຊົ້ນຄົນ ແລະ ເຜົ່າຕ່າງໆ ໃນທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງປະຕິບັດລາຄາໄຟຟ້າປັບປຸງໃໝ່ ປີ 2021.

- ອີງຕາມແຈ້ງການ ຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 202/ຫສນຍ, ລົງວັນທີ 26/02/2021.
- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງ ການນຳກະຊວງພະລັງງານ ແລະ ບໍ່ແຮ່ ຄັ້ງວັນທີ 04/03/2021.

ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ຂໍຖືເປັນກຽດແຈ້ງ ມາຍັງທຸກພາກສ່ວນເພື່ອຊາບ ດັ່ງນີ້: ມອບໃຫ້ ລັດວິສາຫະກິດໄຟຟ້າລາວ ເປັນເຈົ້າການໃນການຈັດຕັ້ງຜັນຂະຫຍາຍນຳໃຊ້ໂຄງສ້າງລາຄາໄຟຟ້າປັບປຸງໃໝ່, ໂດຍເປັນການຜັນຂະຫຍາຍແຈ້ງການ ຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 202/ຫສນຍ ລົງວັນທີ 26/02/2021, ຊຶ່ງໃຫ້ນຳໃຊ້ໂຄງສ້າງລາຄາໄຟຟ້າ ທີ່ເຄີຍໃຊ້ມາແລ້ວໃນໄລຍະປີ 2017-2019 ທັງເຫັນດີໃຫ້ເພີ່ມຂຶ້ນ 2% ເປັນພື້ນຖານໃນການຄິດໄລ່ລາຄາໄຟຟ້າ ໃນປີ 2021 ສຳລັບທຸກກຸ່ມລູກຄ້າ, ເຊິ່ງມີລາຍລະອຽດດັ່ງນີ້:

1. ໂຄງສ້າງລາຄາໄຟຟ້າ ທີ່ປັບປຸງໃໝ່ ໃນແຕ່ລະປະເພດ:

ຫົວໜ່ວຍລາຄາ: ກີບ/ກິໂລວັດໂມງ (ກີບ/kWh)

| ລາຍລະອຽດ ປະເພດຜູ້ຊົມໃຊ້ໄຟຟ້າ | ລາຄາ ປີ 2017-2019 | ລາຄາໄຟຟ້າປະຕິບັດ ໃນປີ 2021 |
|---|---|---|
| *ແຮງດັນຕ່ຳ 0,4 ກວ (ປະເພດທີ່ຢູ່ອາໃສ)* | | |
| ແຕ່ 0 - 25 KWh | 348 | 355 |
| 26 - 150 KWh | 414 | 422 |
| 151 - 300 KWh | 799 | 815 |
| 301 - 400 KWh | 880 | 898 |
| 401 - 500 KWh | 965 | 984 |
| > 500 KWh | 999 | 1,019 |
| *ແຮງດັນຕ່ຳ 0,4 ກວ (ບໍ່ແມ່ນປະເພດທີ່ຢູ່ອາໃສ)* | | |
| ທູດ, ອົງການສາກົນ | 1,420 | 1,448 |
| ທຸລະກິດທົ່ວໄປ, ໄຟຟ້າຊົ່ວຄາວ | 1,101 | 1,123 |
| ທຸລະກິດສຶກສາ ແລະ ກິລາ | 865 | 882 |
| ທຸລະກິດບັນເທີງ | 1,458 | 1,487 |
| ສຳນັກງານລັດບໍລິຫານ | 865 | 882 |
| ກະສິກຳ, ຊົນລະປະທານ | 526 | 537 |
| ອຸດສາຫະກຳປຸງແຕ່ງ | 779 | 795 |

| | | |
|---|---|---|
| ***ແຮງດັນກາງ 22 ກວ*** | | |
| ທຸລະກິດທົ່ວໄປ, ໄຟຟ້າຊົ່ວຄາວ | 935 | 954 |
| ທຸລະກິດສຶກສາ ແລະ ກິລາ | 734 | 749 |
| ທຸລະກິດບັນເທີງ | 1,385 | 1,413 |
| ສໍານັກງານລັດບໍລິຫານ | 734 | 749 |
| ກະສິກໍາ, ຊົນລະປະທານ | 448 | 457 |
| ອຸດສາຫະກໍາປຸງແຕ່ງ (ຕໍ່າກວ່າ 5 MW) | 662 | 675 |
| ອຸດສາຫະກໍາປຸງແຕ່ງ (ສູງກວ່າ 5 MW) | 714 | 728 |
| ***ແຮງດັນສູງ (115 ກວ ຂຶ້ນໄປ)*** | 714 | 728 |

ໝາຍເຫດ:

- ອັດຕາລາຄາໄຟຟ້ານີ້ ຍັງບໍ່ໄດ້ລວມອາກອນມູນຄ່າເພີ່ມ ຕາມທີ່ກົດໝາຍກໍານົດ.
- ອັດຕາລາຄາໄຟຟ້າໃໝ່ນີ້ ບໍ່ຖືກນໍາໃຊ້ຕໍ່ບັນດາໂຄງການທີ່ໄດ້ມີສັນຍາ ຊື້-ຂາຍ ກະແສໄຟຟ້າໂດຍກົງ ກັບ ລັດວິສາຫະກິດໄຟຟ້າລາວ. ຕົວຢ່າງ: ບໍ່ຄໍາເຊໂປນ, ບໍ່ຄໍາພູເບ້ຍ, ເຂດເສດຖະກິດພິເສດດອກງິ້ວຄໍາ, ບໍ່ເຕັນ ແດນຄໍາ ແລະ ໂຄງການທີ່ຊົມໃຊ້ພະລັງງານໄຟຟ້າຈາກການນໍາເຂົ້າ (ໃຫ້ປະຕິບັດຕາມສັນຍາ ຊື້-ຂາຍ ທີ່ຕົກລົງກັນ ຕ່າງຫາກ).
- ການເກັບຄ່າຊົດເຊີຍກໍາລັງທຽມ (Q, Reactive Power, KVAR) ໃຫ້ປະຕິບັດຕາມຂໍ້ຕົກລົງຂອງກະຊວງ ພະລັງງານ ແລະ ບໍ່ແຮ່, ສະບັບເລກທີ 0572/ພບ, ລົງວັນທີ 22 ເມສາ 2015.
- ໃຫ້ຈັດຕັ້ງປະຕິບັດເລີ້ມແຕ່ ເດືອນ 03/2021 ເປັນຕົ້ນໄປ.

2. ມອບໃຫ້ ລັດວິສາຫະກິດໄຟຟ້າລາວ ສືບຕໍ່ຄົ້ນຄວ້າກ່ຽວກັບ ອົງປະກອບຂອງໂຄງສ້າງລາຄາໄຟຟ້າ ແລະ ນະໂຍບາຍ ລາຄາໄຟຟ້າ ແບບສອງລະດູການ (ແລ້ງ ແລະ ຝົນ) ໃຫ້ແກ່ກຸ່ມລູກຄ້າ, ສໍາລັບພາກອຸດສາຫະກໍາ ແມ່ນໃຫ້ສົມທົບກັບ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ຄົ້ນຄວ້າປຶກສາຫາລື ແລະ ວິໄຈ ໃຫ້ລະອຽດຄັກແນ່, ແລ້ວລາຍງານ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອນໍາສະເໜີລັດຖະບານ ພິຈາລະນາ.

3. ມອບໃຫ້ລັດວິສາຫະກິດໄຟຟ້າລາວ ສົມທົບກັບ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຈັດຕັ້ງໂຄສະນາ ແລະ ປະຊາສໍາ ພັນໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈ ຫຼັກການໃນການກໍານົດລາຄາໄຟຟ້າ ແລະ ຄວາມຈໍາເປັນຢ່າງພາວະວິໄສ ໃນການ ປັບລາຄາໄຟຟ້າ ຕາມຄວາມເໝາະສົມ ໃນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງພະລັງງານແລະບໍ່ແຮ່ ຫ້ອງການກະຊວງ

ເພັດສະຫວັນ ລັດຕະນະທົງໄຊ

ບ່ອນນໍາສົ່ງ:

1. ບັນດາ ທ່ານຮອງລັດຖະມົນຕີ 05 ສະບັບ.
2. ບັນດາກົມ ແລະ ສະຖາບັນ ບ່ອນລະ 01 ສະບັບ.
3. ສໍາເນົາ 01 ສະບັບ.